# ບົດຖະແຫຼງຂ່າວ

## ຂອງຄະນະສະເພາະກິດ ເພື່ອປ້ອງກັນ ຄວບຄຸມ ແລະ ແກ້ໄຂ ພະຍາດອັກເສບປອດທີ່ເກີດ ຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19

## ປະຈຳວັນເສົາ ວັນທີ 24 ພຶດສະພາ ປີ 2020

ຂ້າພະເຈົ້າ ຣສ. ດຣ. ພູທອນ ເມືອງປາກ ຮອງລັດຖະມົນຕີ, ກະຊວງສາທາລະນະສຸກ ຂໍລາຍງານສະພາບການຕິດຕາມ, ເຝົ້າລະວັງ ພະຍາດ COVID-19 ຢູ່ ສປປ ລາວ ປະຈຳວັນທີ 23 ພຶດສະພາ 2020 ດັ່ງນີ້:

**I. ສະພາບການເຝົ້າລະວັງ COVID-19 ຢູ່ ສປປ ລາວ ຮອດ 5 ໂມງແລງ ຂອງວັນທີ 23 ພຶດສະພາ 2020**

**1. ວຽກງານຈຸດຜ່ານດ່ານ**

- ຈຳນວນຜູ້ເດີນທາງເຂົ້າມາ ມີທັງໝົດ 2,266 ຄົນ

  - ຈຸດຜ່ານດ່ານ**ລາວ-ໄທ** ທັງໝົດ **1,324** ຄົນ, ໃນນັ້ນ ມີແຮງງານລາວກັບມາຈາກປະເທດໄທທັງໝົດ 49ຄົນ ເຊິ່ງຜ່ານດ່ານສາກົນວັງເຕົ່າ-ຊ່ອງເມັກ ແຂວງຈຳປາສັກ; ຄົນເຈັບກັບຈາກການປິ່ນປົວ 04 ຄົນ ເຊິ່ງຜ່ານດ່ານຂົວມິດຕະພາບ 1 ແລະ ຜ່ານດ່ານສາກົນປາກຊັນ, ແຂວງບໍລິຄຳໄຊ; ເຫຼືອນັ້ນແມ່ນຄົນຂັບລົດສິ່ງສິນຄ້າ.
  - ຈຸດຜ່ານດ່ານ**ລາວ-ຈີນ** ທັງໝົດ **18** ຄົນ, ໃນນັ້ນ ມີຄົນລາວທີ່ຕົກຄ້າງຢູ່ຈີນຖືກສົ່ງກັບມາ 06 ຄົນຜ່ານດ່ານບໍ່ເຕັນ, ແຂວງຫຼວງນ້ຳທາ, ເຫຼືອນັ້ນ ແມ່ນຜູ້ຂັບລົດຂົນສົ່ງສິນຄ້າ.
  - ຈຸດຜ່ານດ່ານ**ລາວ-ຫວຽດ** ທັງໝົດ **815** ຄົນ, ໃນນັ້ນ ມີ ຄົນຫວຽດນາມ 08 ຄົນ ເຂົ້າມາວຽກທາງລັດຖະການ ເຊິ່ງໄດ້ເຂົ້າມາຜ່ານທາງດ່ານນ້ຳກັ່ນ, ແຂວງ ຊຽງຂວາງ, ເຫຼືອນັ້ນ ແມ່ນຄົນຂັບລົດສົ່ງສິນຄ້າ.
- ຈຳນວນຜູ້ເດີນທາງຜ່ານສະໜາມບິນສາກົນວັດໄຕ **109** ຄົນ ທັງໝົດ ແມ່ນຄົນຈີນ ທີ່ເຂົ້າມາສ້າງທາງລົດໄຟ ລາວ-ຈີນ.
- ໃນທຸກດ່ານ ແມ່ນໄດ້ກວດວັດອຸນຫະພູມຮ່າງກາຍ ແລະ ບໍ່ມີຄົນເປັນໄຂ້.

- ສຳລັບແຮງງານລາວ ຈຳນວນ 49 ຄົນ ເຊິ່ງຜ່ານດ່ານວັງເຕົ່າ-ຊ່ອງເມັກ ແຂວງຈຳປາສັກ ນັ້ນແມ່ນມີຖິ່ນຖານມາຈາກ ແຂວງຈຳປາສັກ 39 ຄົນ, ສາລະວັນ 07 ຄົນ, ສະຫວັນນະເຂດ 03 ຄົນ.
- ແຮງງານທັງໝົດໄດ້ເກັບຕົວຢ່າງມາກວດ ແລະ ນຳສົ່ງໄປຈຳກັດບໍລິເວນຢູ່ສູນຂອງແຂວງ ຈົນກ່ວາຈະຄົບກຳນົດ 14 ວັນ.

## 2. ການເຝົ້າລະວັງ ແລະ ວິເຄາະ

- ໃນວັນທີ 23 ພຶດສະພາ 2020, ໄດ້ເກັບຕົວຢ່າງມາກວດທັງໝົດ **293** ຄົນ, ໃນນັ້ນ ມີກໍລະນີສົງໄສ **01** ຄົນ, ແຮງງານລາວທີ່ກັບມາແຕ່ໄທ **175** ຄົນ, ແຮງງານຈີນ **111** ຄົນ ຢູ່ແຂວງຫຼວງນ້ຳທາ, ຄົນເຈັບທີ່ອອກໂຮງໝໍຄົບກຳນົດຕິດຕາມມາກວດຄືນ 06 ຄົນ.
- ກໍລະນີສົງໄສ 01 ຄົນ ແມ່ນມາຈາກ ແຂວງສະຫວັນນະເຂດ ເຊິ່ງເປັນຄົນຫວຽດນາມທີ່ນອນປິ່ນປົວຢູ່ໂຮງໝໍແຂວງ.
- ແມ່ນແຮງງານລາວທີ່ກັບມາຈາກປະເທດໄທ 175 ຄົນ ລາຍລະອຽດດັ່ງລຸ່ມນີ້:

  - ຫຼວງພະບາງ 45 ຄົນ
  - ສະຫວັນນະເຂດ 33 ຄົນ
  - ນະຄອນຫຼວງວຽງຈັນ 27 ຄົນ
  - ຈຳປາສັກ 14 ຄົນ
  - ບໍລິຄຳໄຊ 12 ຄົນ
  - ໄຊຍະບູລີ 11 ຄົນ
  - ສາລະວັນ 10 ຄົນ
  - ຄຳມ່ວນ 10 ຄົນ
  - ວຽງຈັນ 04 ຄົນ
  - ຫົວພັນ 04 ຄົນ
  - ອຸດົມໄຊ 03 ຄົນ
  - ບໍ່ແກ້ວ 01 ຄົນ

- ຊຽງຂວາງ 01 ຄົນ

- ຜົນກວດກໍລະນີສົງໄສ, ແຮງງານລາວ ແລະ ຈີນ ມື້ວານນີ້ **ບໍ່ພົບເຊື້ອ.**

- **ໝາຍຄວາມວ່າໃນວັນທີ 23 ພຶດສະພາ 2020 ບໍ່ມີຜູ້ຕິດເຊື້ອໃໝ່.**
- ສັງລວມການກວດວິເຄາະ ແຕ່ເດືອນມັງກອນ ຮອດ ວັນທີ 23 ພຶດສະພາ 2020 ໄດ້ເກັບຕົວຢ່າງມາກວດທັງໝົດ ມີ **5,487** ຕົວຢ່າງ, ກວດພົບເຊື້ອສະສົມ **19** ຄົນ (**42 ມື້ແລ້ວທີ່ບໍ່ພົບຜູ້ຕິດເຊື້ອໃໝ່**).

**3. ການຕິດຕາມຜູ້ເດີນທາງມາຈາກຕ່າງປະເທດໂດຍສະເພາະແຮງງານລາວຢູ່ສະຖານທີ່ຈຳກັດບໍລິເວນຕ່າງໆຂອງແຂວງ**

- ປະຈຸບັນນີ້ທົ່ວປະເທດ ມີສູນຈຳກັດບໍລິເວນ ທັງໝົດ **95** ສູນ, ມີຜູ້ຈຳກັດບໍລິເວນຢູ່ສູນ **3,519** ຄົນ, ໄດ້ເກັບຕົວຢ່າງມາກວດວິເຄາະ ທັງໝົດ ແລະ ບໍ່ມີຜູ້ຕິດເຊື້ອ.

**4. ການຕິດຕາມປິ່ນປົວຄົນເຈັບຢູ່ໂຮງໝໍ**

- ປັດຈຸບັນ, ມີຜູ້ນອນຕິດຕາມຢູ່ໂຮງໝໍມິດຕະພາບ 05 ຄົນ ຍິງ 04 ຄົນ ທັງໝົດເຫັນວ່າມີອາການປົກກະຕິ ຈະໄດ້ສືບຕໍ່ຕິດຕາມຕໍ່ໄປຈົນກ່ວາຈະກວດຫາເຊື້ອບໍ່ພົບ.

**5. ການຕິດຕາມສະພາບການລະບາດຂອງປະເທດໃກ້ຄຽງ ແລະ ການລະບາດຢູ່ໃນໂລກ ເຫັນວ່າ:**

- ມາຮອດເວລາ 6:00 ໂມງເຊົ້າ ຂອງວັນທີ 24 ພຶດສະພາ 2020, ທົ່ວໂລກມີການລາຍງານການລະບາດ ທັງໝົດ 213 (ປະເທດ/ເຂດ).

  - ມີການຢັ້ງຢືນ ຜູ້ຕິດເຊື້ອພະຍາດ COVID-19 ແມ່ນ 5,391,753 (93,546 ໃໝ່)

    **ມື້ວານນີ້ 5,296,944**

  - ເສຍຊີວິດ 343,500 (4,075 ໃໝ່) ກວມເອົາ 6.37 % ຂອງຜູ້ຕິດເຊື້ອທັງໝົດ.

  - ປິ່ນປົວຫາຍດີ **2,236,162** (86,591 ໃໝ່) ກວມເອົາ 41,47 % ຂອງຜູ້ຕິດເຊື້ອທັງໝົດ.

- ປະເດັນສຳຄັນ ແມ່ນຍັງມີການລະບາດເປັນວົງກ້ວາງຢູ່ ທະວີບອາເມລິກາ ແລະ ທະວີບ ຢູໂຣບ, ມີບາງປະເທດ ຈຳນວນຜູ້ຕິດເຊື້ອມື້ດຽວ ມີເຖິງ **20,921** ຄົນ ແລະ ເສຍຊີວິດ **1,011** ຄົນຕໍ່ມື້.
- ໃນບັນດາ**ກຸ່ມປະເທດອາຊຽນ** ມາຮອດເວລາ 6:00 ໂມງເຊົ້າ ຂອງວັນທີ 24 ພຶດສະພາ ມີການຢັ້ງຢືນ ຜູ້ຕິດເຊື້ອພະຍາດ COVID-19 ແມ່ນ **77,624** (1,825ໃໝ່), ເສຍຊີວິດ **2,415** (31 ໃໝ່), ຍັງມີບາງປະເທດທີ່ມີອັດຕາການຕິດເຊື້ອໃໝ່ສູງເຖິງ **949** ຄົນຕໍ່ມື້.

## 6. ຂໍ້ແນະນຳ

ບັນດາທ່ານທີ່ນັບຖື ແລະ ຮັກແພງ,

- ບັນດາທ່ານໄດ້ຮັບຟັງຂໍ້ມູນ ສະພາບການກັ່ນກອງຜູ້ເດີນທາງເຂົ້າມາ ຕາມຈຸດຜ່ານແດນຕ່າງໆແລ້ວ, ສະພາບການລະບາດຂອງພະຍາດ COVID-19 ຢູ່ປະເທດເຮົາກໍ່ຄືຢູ່ະເທດອາຊຽນ ແລະ ໃນໂລກ.
- ຂໍ້ມູນສຳຄັນໃນມື້ນີ້ ແມ່ນການລາຍງານ ຂອງລະບົບເຝົ້າລະວັງພະຍາດ ຈາກທົ່ວປະເທດມາຫາສູນປະຕິບັດງານສຸກເສີນ ຂອງກະຊວງສາທາລະນະສຸກ ຢັ້ງຢືນວ່າ ສປປ ລາວ ບໍ່ພົບຜູ້ຕິດເຊື້ອໃໝ່ 42 ວັນແລ້ວ (ເລີ່ມແຕ່ວັນທີ 12 ເມສາ 2020 ເປັນຕົ້ນມາ) ໄດ້ເກັບຕົວຢ່າງມາກວດທັງໝົດ ມີ **5,487** ຕົວຢ່າງ, ມີຈຳນວນຜູ້ຕິດເຊື້ອສະສົມ ທັງໝົດ 19 ຄົນ, ຍັງນອນຕິດຕາມຢູ່ໂຮງໝໍ 05 ຄົນ, ຍິງ 04 ຄົນ.
- ບັນຫາສຳຄັນ ຂໍໃຫ້ບັນດາທ່ານເຂົ້າໃຈວ່າ ການຜ່ອນຜັນມາດຕະການຕ່າງໆ ແມ່ນນະໂຍບາຍຂອງພັກ-ລັດຖະບານ ທີ່ເປັນຮ່ວງເປັນໄຍຕໍ່ຜົນກະທົບດ້ານຊີວິດການເປັນຢູ່ຂອງພໍ່ແມ່ປະຊາຊົນ ແລະ ດ້ານເສດຖະກິດ-ສັງຄົມ ຊຶ່ງເປັນໂອກາດໃຫ້ພາກທຸລະກິດກໍ່ຄືພໍ່ແມ່ປະຊາຊົນບັນດາເຜົ່າໄດ້ກັບຄືນມາດຳເນີດກິດຈະການ ຫຼື ດຳເນີນຊີວິດເປັນປົກກະຕິເທື່ອລະກ້າວ ແຕ່ພ້ອມດຽວກັນນີ້ກໍ່ເປັນໂອກາດທີ່ຈະມີຄວາມສ່ຽງ ທີ່ຈະເກີດການລະບາດຮອບໃໝ່ ຖ້າຫາກວ່າພວກເຮົາ ບໍ່ປະຕິບັດວິທີການປ້ອງກັນການຕິດເຊື້ອຢ່າງເຂັ້ມງວດ ໂດຍສະເພາະຢູ່ສະຖານທີ່ໃຫ້ບໍລິການ, ພະຫະນະໃຊ້ບໍລິການ, ຜູ້ໃຫ້ບໍລິການ ແລະ ຜູ້ມາໃຊ້ບໍລິການເປັນຕົ້ນແມ່ນ: ການປະຕິບັດຫຼັກການອະນາໄມ, ການທຳຄວາມສະອາດຂ້າເຊື້ອພະຍາດຢູ່ສະຖານທີ່ບໍລິການ, ການແທກອຸນຫະພູມຮ່າງກາຍ, ການລ້າງມືດ້ວຍນ້ຳສະອາດໃສ່ສະບູ

ຫຼື ໃຊ້ເຈວລ້າງມື, ການປະຕິບັດໄລຍະຫ່າງທາງສັງຄົມ, ບໍ່ໃຫ້ມີການແອອັດ, ການໃສ່ຜ້າປິດປາກ-ດັງ ເວລາອອກຈາກບ້ານ ຫຼື ໄປສະຖານທີ່ ທີ່ມີຄວາມສ່ຽງຕໍ່ການຕິດເຊື້ອ ທັງໝົດນີ້ໃຫ້ກາຍເປັນຄວາມຊິນເຄີຍໃນການດໍາລົງຊີວິດປະຈໍາວັນ. ພວກເຮົາຈຶ່ງຈະສາມາດສະ

ກັດກັ້ນ ການລະບາດຂອງພະຍາດ COVID-19 ບໍ່ໃຫ້ກັບຄືນມາຮອບໃໝ່.

- ອີງຕາມການສ່ອງແສງຂອງຄະນະສະເພາະກິດຂະແໜງຕ່າງໆ, ສັງເກດເຫັນວ່າ ການປະຕິບັດ ແຈ້ງການເລກທີ 580/ຫສນຍ ແມ່ນມີບາງຢ່າງ ຍັງເຮັດບໍ່ທັນໄດ້ດີ ເປັນຕົ້ນວ່າ: ການປະຕິບັດມາດຕະການປ້ອງກັນການຕິດເຊື້ອພະຍາດ ຢູ່ໂຮງຮຽນ, ສະຖານີຂົນສົ່ງໂດຍສານ, ຮ້ານຄ້າຂາຍຍ່ອຍ ຍັງບໍ່ທັນໄດ້ດີ, ຍັງມີການຊຸມແຊວ, ກິນດື່ມສິ່ງມຶນເມົາເປັນກຸ່ມຄົນ ເຊິ່ງຈະມີຄວາມສ່ຽງຕໍ່ການຕິດເຊື້ອ.
- ອີກເທື່ອໜຶ່ງ ຂໍຮຽກຮ້ອງໃຫ້ທຸກພາກສ່ວນໃນສັງຄົມ, ຊຸມຊົນ, ຄອບຄົວ ແລະ ສ່ວນບຸກຄົນ ຈົ່ງເອົາໃຈໃສ່ ທໍາຄວາມເຂົ້າໃຈ ແຈ້ງການຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ເລກທີ 580/ຫສນຍ ຄໍາແນະນໍາຂອງຂະແໜງການກ່ຽວຂ້ອງ ພ້ອມທັງ ຮ່ວມແຮງຮ່ວມໃຈກັນ ສືບຕໍ່ປະຕິບັດ ຈົນກວ່າຈະມີແຈ້ງການປ່ຽນແປງ ຫຼັງວັນທີ 01 ມິຖຸນາ 2020. ອາທິດຈະມານີ້, ຄະນະສະເພາະກິດ ກໍ່ຈະໄດ້ປະເມີນສະຖານະການຄືນໃໝ່ ເພື່ອສະເໜີລັດຖະບານພິຈາລະນາ ຜ່ອນຜັນບາງມາດຕະການຕື່ມອີກ.
- ໂອກາດທີ່ມີການປ່ຽນແປງຂອງດິນຟ້າອາກາດກ້າວເຂົ້າສູ່ລະດູຝົນ, ກະຊວງສາທາລະນະສຸກ ບໍ່ພຽງແຕ່ຄວບຄຸມການລະບາດຂອງພະຍາດ COVID-19 ຍັງໄດ້ເອົາໃຈໃສ່ ປ້ອງກັນ ແລະ ຄວບຄຸມການລະບາດຂອງພະຍາດຕາມລະດູການເປັນຕົ້ນແມ່ນ: ຖອກທ້ອງ, ໄຂ້ຫວັດ, ໝາກແດງ, ມາລາເຣຍ ແລະ ໄຂ້ຍຸງລາຍ, ທັງໄດ້ເປີດຂະບວນການສັກຢາກັນພະຍາດທົ່ວປະເທດ. ສະເພາະໄຂ້ຍຸງລາຍປີ 2019 ຜ່ານມາມີຜູ້ຕິດເຊື້ອທັງໝົດ 39,091 ຄົນ, ເສຍຊີວິດ 76 ຄົນ, ປີ 2020 ມາຮອດວັນທີ 22 ພຶດສະພາ 2020 ມີຜູ້ຕິດເຊື້ອທັງໝົດ 1,337 ຄົນ, ເສຍຊີວິດ 04 ຄົນ ຢູ່ນະຄອນຫຼວງວຽງຈັນ 02 ຄົນ, ໄຊຍະບູລີ 01 ຄົນ ແລະ ແຂວງຄໍາມ່ວນ 01 ຄົນ, ຖືວ່າເປັນພະຍາດທີ່ມີຄວາມຮຸນແຮງເຊັ່ນກັນ. ສະນັ້ນ ຈຶ່ງຂໍເຊີນຊວນພໍ່ແມ່ປະຊາຊົນບັນດາເຜົ່າຈົ່ງໄດ້ເປັນເຈົ້າການໃນການ

ທຳລາຍແຫຼ່ງເພາະພັນຍຸງລາຍ ແລະ ນຳພາລູກຫຼານໄປສັກຢາກັນພະຍາດ ຕາມຕາຕະລາງສັກຢາ.

- ການຖະແຫຼງຂ່າວມາຮອດມື້ນີ້ໄດ້ສິ້ນສຸດລົງ.

**ຂໍຂອບໃຈ ໃນການຕິດຕາມຮັບຊົມ ແລະ ຮັບຟັງ**